ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# 3 ອົງການຈັດຕັ້ງມະຫາຊົນ ທຄຕລ ຊ່ວຍເຫຼືອ 6 ພາກສ່ວນ ເພື່ອຕ້ານການລະບາດຂອງພະຍາດ COVID-19 ມູນຄ່າ 145 ລ້ານກວ່າກີບ

3 ອົງການຈັດຕັ້ງມະຫາຊົນ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ ຫຼື BCEL) ປະກອບສ່ວນໃນຂະບວນການຕ້ານການລະບາດຂອງພະຍາດ COVID-19 ໂດຍການລະດົມທຶນຈາກສະມາຊິກ ແລະ ພະນັກງານ ທຄຕລ ທົ່ວລະບົບ ເພື່ອຊື້ວັດຖຸອຸປະກອນທີ່ຈຳເປັນໃນການຮັບໃຊ້ວຽກງານຕ້ານການລະບາດພະຍາດໂຄວິດ-19 ຈຳນວນຫນຶ່ງມອບໃຫ້ແກ່ 6 ພາກສ່ວນ ໂດຍສະເພາະແມ່ນ ບັນດາໂຮງໝໍ, ມະຫາວິທະຍາໄລ ມູນຄ່າ **145 ລ້ານກວ່າກີບ.** ໂດຍໄດ້ຈັດພິທີມອບ-ຮັບສຳເລັດທຸກພາກສ່ວນ ໃນລະຫວ່າງວັນທີ 10-27 ເມສາ 2020 ນີ້ ນຳພາໂດຍ ຄະນະອຳນວຍການ, ຄະນະບໍລິຫານງານຂອງສາມອົງການຈັດຕັ້ງມະຫາຊົນ ທຄຕລ ໃນການມອບວັດຖຸອຸປະກອນທີ່ຈຳເປັນ ເພື່ອເປັນການສະແດງຄວາມຫ່ວງໃຍ ແລະ ນ້ຳໃຈຂອງ ຄະນະຜູ້ບໍລິຫານງານ ແລະ ສະມາຊິກຂອງ 3 ອົງການຈັດຕັ້ງມະຫາຊົນ ທຄຕລ ຕໍ່ພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນແພດໝໍ ໂດຍລາຍລະອຽດມີດັ່ງນີ້:

1. ວັນທີ 10/4/2020, ໃນນາມຄະນະກຳມະບານຮາກຖານ ທຄຕລ ໄດ້ມອບຈັກຊັກເຄື່ອງອັດຕະໂນມັດທີ່ມີລະບົບນ້ຳຮ້ອນຂ້າເຊື້ອ, ເຕົາລີດ, ຕຽງພັບ ແລະ ເຄື່ອງໃຊ້ອື່ນໆອີກຈຳນວນຫນຶ່ງ ລວມມູນຄ່າ **10 ລ້ານກີບ** ມອບໃຫ້ແກ່ ໂຮງຫມໍເສດຖາທິລາດ ທີ່ນະຄອນຫຼວງວຽງຈັນ, ໃຫ້ກຽດມອບໂດຍ ທ່ານ ສົມສຸກ ດວງດາລາ ແລະ ທ່ານ ຄຳສະຫວັນ ອຸດທະຈັກ ຕາງຫນ້າຄະນະກຳມະບານຮາກຖານ ທຄຕລ, ໃຫ້ກຽດຮັບໂດຍ ທ່ານ ດຣ ໄພວັນ ແກ້ວປະເສີດ ຜູ້ອຳນວຍການໂຮງໝໍເສດຖາທິລາດພ້ອມດ້ວຍຄະນະ.
2. ວັນທີ 22/4/2020, ໃນນາມ 3 ອົງການຈັດຕັ້ງມະຫາຊົນ ທຄຕລ ໄດ້ມອບ ເງິນ ແລະ ນ້ຳດື່ມ ລວມມູນຄ່າ **20 ລ້ານກີບ** ໃຫ້ແກ່ ມະຫາວິທະຍາໄລແຫ່ງຊາດ ເພື່ອຊຸກຍູ້ນັກສຶກສາຕ່າງປະເທດທີ່ຍັງຢູ່ຫໍພັກຫລາຍກວ່າ 500 ຄົນ, ໃຫ້ກຽດມອບໂດຍ ທ່ານ ບົວວັນ ສີມະລີວົງ ຮອງຜູ່ອຳນວຍການ ທຄຕລ ພ້ອມດ້ວຍຕາງຫນ້າ 3 ອົງການຈັດຕັ້ງມະຫາຊົນ. ໃຫ້ກຽດຮັບໂດຍ ທ່ານ ສຈ ດຣ ສົມສີ ຍໍພັນໄຊ ອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ ພ້ອມດ້ວຍຄະນະ.
3. ວັນທີ 22/4/2020 ໃນນາມ 3 ອົງການຈັດຕັ້ງມະຫາຊົນ ທຄຕລ ໄດ້ມອບເຄື່ອງມືການແພດທີ່ໃຊ້ໃນການຕ້ານພະຍາດໂຄວິດ-19 ເຊັ່ນ: ຊຸດກັນເຊື້ອ PPE, ເຈວລ້າງມືຂ້າເຊື້ອ, ເຫລົ້າ 90, ຫນ້າກາກອານາໄມ, ນ້ຳດື່ມ ລວມມູນຄ່າ **40.8 ລ້ານກີບ** ໃຫ້ແກ່ໂຮງໝໍມິດຕະພາບ ໃຫ້ກຽດຮັບໂດຍ ທ່ານ ບົວວັນ ສີມະລີວົງ ຮອງຜູ່ອຳນວຍການ ພ້ອມດ້ວຍຕາງຫນ້າ 3 ອົງການຈັດຕັ້ງມະຫາຊົນ, ໃຫ້ກຽດຮັບໂດຍ ທ່ານ ດຣ. ສະໜອງ ທອງຊະນະ ຜູ້ອຳນວຍການໂຮງໝໍມິດຕະພາບ ພ້ອມດ້ວຍຄະນະ.
4. ວັນທີ 23/4/2020 ໃນນາມ 3 ອົງການຈັດຕັ້ງມະຫາຊົນ ທຄຕລ ໄດ້ມອບເຄື່ອງມືການແພດທີ່ໃຊ້ໃນການຕ້ານພະຍາດໂຄວິດ-19 ແລະ ນ້ຳດື່ມ ລວມມູນຄ່າ **26.44 ລ້ານກີບ** ໃຫ້ແກ່ໂຮງຫມໍມະໂຫສົດ ໃຫ້ກຽດມອບໂດຍ ທ່ານ ວຽງສຸກ ຈຸນທະວົງ, ຮອງຜູ່ອຳນວຍການ ທຄຕລ ພ້ອມດ້ວຍຕາງຫນ້າ 3 ອົງການຈັດຕັ້ງມະຫາຊົນ, ໃຫ້ກຽດຮັບໂດຍ ດຣ ພິສິດ ພູດສະຫວັດ ຜູ່ອຳນວຍການໂຮງຫມໍມະໂຫສົດ ແລະ ທ່ານ ອາຈານ ນາງ ອາພອນ ວິຊາເທບ ຮອງຜູ່ອຳນວຍການໂຮງຫມໍມະໂຫສົດ.
5. ວັນທີ 23/4/2020 ໃນນາມ 3 ອົງການຈັດຕັ້ງມະຫາຊົນ ທຄຕລ ໄດ້ມອບເຄື່ອງມືການແພດທີ່ໃຊ້ໃນການຕ້ານພະຍາດໂຄວິດ-19 ແລະ ນ້ຳດື່ມ ລວມມູນຄ່າ **27.14 ລ້ານກີບ** ໃຫ້ແກ່ໂຮງຫມໍ 103, ໃຫ້ກຽດມອບໂດຍ ທ່ານ ວຽງສຸກ ຈຸນທະວົງ, ຮອງຜູ່ອຳນວຍການ ທຄຕລ ພ້ອມດ້ວຍຕາງຫນ້າ 3 ອົງການຈັດຕັ້ງມະຫາຊົນ, ໃຫ້ກຽດຮັບໂດຍ ທ່ານ ພັທ ດຣ ສະແຫວງໄຊ ດາລາສາດ ຮອງຜູ່ອຳນວຍການຫົວໜ້າຫ້ອງບໍລິຫານການແພດ, ທ່ານ ດຣ ບຸນຈັນ ວໍລະບຸດ ຮອງຜູ່ອຳນວຍການສາຍພາຍນອກ, ທ່ານ ດຣ ອຳພອນ ພົມມະຫາ ຮອງຫ້ອງບໍລິຫານການແພດ.
6. ວັນທີ 27/4/2020 ໃນນາມ 3 ອົງການຈັດຕັ້ງມະຫາຊົນ ທຄຕລ ໄດ້ມອບເຄື່ອງມືການແພດທີ່ໃຊ້ໃນການຕ້ານພະຍາດໂຄວິດ-19 ເຊັ່ນ: ຊຸດກັນເຊື້ອ, ຫນ້າກາກອານາໄມ, ເຈລລ້າງມືຂ້າເຊື້ອ ລວມມູນຄ່າ **21.1 ລ້ານກີບ** ໃຫ້ແກ່ໂຮງຫມໍແຂວງຫລວງພະບາງ, ຕາງໜ້າສາມອົງການຈັດຕັ້ງມະຫາຊົນມອບໂດຍ ທ່ານ ບຸນທັນ ແກ້ວບຸບຜາ ຫົວໜ້າ ທຄຕລ ສາຂາຫຼວງພະບາງ ພ້ອມດ້ວຍຕາງຫນ້າ 3 ອົງການຈັດຕັ້ງມະຫາຊົນຂອງສາຂາ. ໃຫ້ກຽດຮັບໂດຍ ທ່ານ ດຣ ທອງພຸດ ສຸກກະເສີມ ອຳນວຍການໂຮງຫມໍແຂວງຫຼວງພະບາງພ້ອມດ້ວຍຄະນະ.

***ລວມມູນຄ່າການຊ່ວຍເຫຼືອທັງໝົດໃນຄັ້ງນີ້ແມ່ນ 145,480,000.00 ກີບ*** *(ໜຶ່ງຮ້ອຍສີ່ສິບຫ້າລ້ານສີ່ແສນແປດສິບພັນກີບຖ້ວນ).* ໂດຍພິທີມອບ-ຮັບໄດ້ດຳເນີນໄປຢ່າງອົບອຸ່ນ ເຊິ່ງໃນພິທີມອບ-ຮັບນັ້ນ; ຕາງໜ້າທັງ 6 ພາກສ່ວນ ກໍ່ໄດ້ກ່າວສະແດງຂອບໃຈຢ່າງສູງຕໍ່ຄະນະບໍລິຫານງານ ແລະ ສະມາຊິກ ຂອງ 3 ອົງການຈັດຕັ້ງມະຫາຊົນ ທຄຕລ ເນື່ອງຈາກວັດຖຸອຸປະກອນທີ່ຈັດມອບໃຫ້ນັ້ນແມ່ນຈຳເປັນຫຼາຍໃນການຮັບມືຕ້ານການແຜ່ລະບາດພະຍາດດັ່ງກ່າວ ແລະ ຈະນຳເອົາເຄື່ອງຊ່ວຍເຫຼືອນີ້ ນຳໃຊ້ໃຫ້ເກີດປະໂຫຍດສູງສຸດ.

ນອກຈາກການຊ່ວຍເຫຼືອດັ່ງກ່າວແລ້ວ ປະຈຸບັນ ທຄຕລ ກໍ່ຍັງສືບຕໍ່ລະດົມທຶນຈາກພະນັກງານ ທຄຕລ ທົ່ວລະບົບເພື່ອຊ່ວຍເຫຼືອຕື່ມອີກ. ພ້ອມດຽວກັນນັ້ນ, ທຄຕລ ກໍ່ຍັງໄດ້ເປີດໂຄງການ BCEL OneHeart *"ລະດົມທຶນໃຫ້ການຊ່ວຍເຫຼືອເພື່ອຕ້ານໂລກລະບາດ COVID-19"* ເຊິ່ງລູກຄ້າ ທຄຕລ ທີ່ນຳໃຊ້ BCEL One ສາມາດຮ່ວມບໍລິຈາກໄດ້ ລາຍລະອຽດສາມາດເຂົ້າເບິ່ງໄດ້ຜ່ານລິ້ງນີ້: https://oneheart.la/projects/oneheartcovid19 ເຊິ່ງຈະຈັດພິທີການມອບ-ຮັບເປັນແຕ່ລະໄລຍະໃນມື້ໆນີ້.



ຮູບພາບ 1: ພິທີມອບ-ຮັບ ທີ່ ໂຮງໝໍໄຊເສດຖາທິລາດ




ຮູບພາບ 2: ພິທີມອບ-ຮັບ ທີ່ ມະຫາວິທະຍາໄລແຫ່ງຊາດ




ຮູບພາບ 3: ພິທີມອບ-ຮັບ ໂຮງໝໍມິດຕະພາບ




ຮູບພາບ 4: ພິທີມອບ-ຮັບ ທີ່ ໂຮງໝໍມະໂຫສົດ




ຮູບພາບ 5: ພິທີມອບ-ຮັບ ທີ່ ໂຮງໝໍ 103




ຮູບພາບ 6: ພິທີມອບ-ຮັບ ທີ່ ໂຮງໝໍແຂວງຫຼວງພະບາງ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທັນສະໄໝ ວ່ອງໄວ ໝັ້ນໃຈ

Call center: 1555, Facebook & Instagram: BCEL Bank, Website: www.bcel.com.la

*ຂຽນຂ່າວໂດຍ: ນາງ ສຸກສາຄອນ ບຸນສະຫວັດທິພັນ (MKT)*